# ຄະດີການຫລອກເງິນ 100 ລ້ານ

## US $100-Million Scam

ໂດຍ : ທະນາຍຄວາມ ອິນໂຕ ຈຳພັນ, ESQ.,C.C.I.M.

## 18 ມົງກຸດໃນຄາບນັກບຸນ



ຫລາຍໆທ່ານຄົງຈະເຄີຍໄດ້ຍິນຜ່ານມາແລ້ວກ່ຽວກັບ"**ຄະດີການສໍ້ໂກງ ໄນຈີເຣັຽ**" ຈາກລາຍການ **60 Minute** ທາງສະຖານີໂທຣະທັສ **CBS** ຫລື ຈາກລາຍການຕ່າງໆເມື່ອປີທີ່ຜ່ານມາຢ່າງຄຶກໂຄມແລະເມື່ອບໍ່ດົນຜ່ານມານີ້ກໍໄດ້ມີຄົນໂທຣະສັພເຂົ້າມາເຖິງຂ້າພະເຈົ້າຫລາຍໆຄົນໂດຍທີ່ໄດ້ເລົ່າເຖິງເລື້ອງລາວຂອງການສໍ້ໂກງຂບານໃຫຍ່ໃນລັກສນະດຽວກັນນີ້ຢູ່ໃນສັງຄົມຊາວລາວແລະຊາວໄທຍ໌ທົ່ວສາຣະທິດ. ຂ້າພະເຈົ້າຈຶ່ງຫວັງວ່າບົດຄວາມນີ້ຈະອອຍເຮັດໃຫ້ທ່ານຜູ້ອ່ານຫູແຈ້ງຕາໄສ ແລະສາມາດທຳການຫລີກລຽງຈາກການຕົກໄປເປັນເຫຍື່ອຂອງກຸ່ມມິດສາຊີພທີ່ຊົ່ວຮ້າຍເຫລົ່ານີ້ອອກໄປໄດ້.ດັ່ງທີ່ເອີ້ນກັນວ່າການສໍ້ໂກງ "ໄນຈີເຣັຽ" ນັ້ນກໍເພາະເຫັນວ່າເປັນການສໍ້ໂກງໃນລັກສນະດຽວກັນນີ້ມາຢ່າງຫລວງຫລາຍໂດຍທີ່ໄດ້ເລີ້ມຕົ້ນມາຈາກປະເທດໄນຈີເຣັຽ ເບື້ອງຕົ້ນຈະເລີ້ມມາຈາກການທີ່ໄດ້ມີຜູ້ສົ່ງອີແມລ ຫລື ເປັນຈດໝາຍໂດຍທີ່ໄດ້ອ້າງຕົວເອງວ່າເປັນຍາດພີ່ນ້ອງຊັ້ນຈຳທີ່ຈະໄດ້ຮັບມໍຣະດົກມາຈາກອະດີດຂ້າຣາຊການັ້ນສູງຂອງໄນຈີເຣັຽ ຫລື ຢູ່ໃນປະເທດອື່ນໆແລ້ວແຕ່ຜູ້ກ່ຽວຈະນຳອອກມາອ້າງອີງເພື່ອເຮັດໃຫ້ເຫຍື່ອຕາຍໃຈແລະມີຄວາມເຊື່ອໝັ້ນຂຶ້ນຕື່ມຈາກນັ້ນຜູ້ທີ່ຂຽນຈົດໝາຍ (ຫລື ກຸ່ມມິດສາີພພວກນີ້) ກໍຈະທຳການຂໍກູ້ຢືມເງິນຈາກຜູ້ທີ່ໄດ້ຮັບຈົດໝາຍເພື່ອເປັນຄ່າໃຊ້ຈ່າຍທີ່ຜູ້ກ່ຽວຈະໄດ້ເດີນທາງໄປຮັບເອົາເງິນກ້ອນໃຫຍ່ທີ່ເປັນມໍຣະດົກຊຶ່ງອາດຈະສູງເຖິງ $100 ລ້ານດອນລາສະຫະຣັຖ ແລະຜູ້ກ່ຽວກໍຈະໄດ້ສັນຍາກັບເຫຍື່ອວ່າຈະໃຫ້ຣາງວັນແກ່ຜູ້ທີ່ໃຫ້ຢືມເງິນເຫລົ່ານັ້ນດ້ວຍ. ໃນບາງກໍຣະນີຜູ້ທີ່ຂຽນຈົດໝາຍ (ກຸ່ມມິດສາຊີພເຫລົ່ານີ້) ອາດຈະມີຫລັກຖານທີ່ສຳຄັນໆ ທີ່ເປັນທາງການນຳມາສະແດງອັນປະກອບ ໃຫ້ເຫຍື່ອໄດ້ເຫັນວ່າ ມີເງິນກ້ອນໃຫຍ່ໃນຊື່ຂອງຜູ້ກ່ຽວແທ້ ພາຍຫລັງ ທີ່ໄດ້ຮັບເງິນ "ຄ່າໃຊ້ຈ່າຍ" ຫລື ທຳການເບີກເງິນຈາກຜູ້ທີ່ໄດ້ຮັບຈົດໝາຍນີ້ໄປແລ້ວທຸກຢ່າງເໝືອນມີປີກ່ງ ກຸ່ມມິດສາີພເຫລົ່ານີ້ກໍຈະຫາຍໂຕເຂົ້າກີບເມກໄປເລີຍແບບທີ່ບໍ່ເຫັນຫົວສົ້ນປາຍບອນ "ນີ້ຄືຄວາມຈິງທີ່ປາກົດອອກມາແລ້ວຢູ່ໃນສະຫະຣັຖອະເມຣິກາແລະຢູ່ທີ່ປະເທດໃກ້ຄຽງ". ເໝືອນກັນກັບຄະດີການສໍ້ໂກງໄນຈີເຣັຽດັ່ງກ່າວນີ້ທຸກຢ່າງການສໍ້ໂກງໃນລັກສນະນີ້ແມ່ນໄດ້ເກີດມີຂຶ້ນມາແລ້ວກັບສັງຄົມ ລາວ-ໄທຍມາຢ່າງຕໍ່ເນື່ອງຈາກປັນຫາແລະເຫດການທີ່ເກີດມີຂຶ້ນມາກໍເນື່ອງມາຈາກພື້ນຖານຂອງຄວາມໂລບຫລົງໃນຈິດສຳນຶກຂອງຜູ້ຄົນເຮົາທັງໝົດນັ້ນເອງ. ກູ່ມມິດສາຊີພ ຫລື ພວກຕົ້ມຕຸນສິບແປດມົງກຸດ ເຫລົ່ານີ້ມັກຈະແອບອ້າງອອກມາວ່າ "ພວກຕົນມີເງິນກ້ອນໃຫຍ່ເຖິງ 100 ລ້ານດອນລາ" ແລະເງິນມໍຣະດົກດັ່ງກ່າວນີ້ກຳລັງຈະມາເຖິງຕົນໃນອານາຄົດອັນໃກ້.ຂໍໃຫ້ພິນິດພິຈາຣະນາສັງເກດເບິ່ງໃຫ້ດີໆ ຊຶ່ງຄົນພວກນີ້ມັນຈະໃຈ່າຍເງິນຢ່າງຟູມເຟືອຍຕໍ່ໜ້າຜູ້ຄົນຫລື ບາງຄັ້ງມັນກໍຈະທຳການແຈກເງິນໃຫ້ກັບຜູ້ຄົນທີ່ຫລົງກົນແລະກໍໃຫ້ສັນຍາເປັນຕຸເປັນຕໍອອກມາທີ່ໄດ້ຮັບເງິນວ່າຈະໃຫ້ເງິນກ້ອນໃຫຍ່ຊຶ່ງຜູ້ຄົນເລົ່ານີ້ໄປແລ້ວກໍຈະປ່າວປະກາດເວົ້າກັນຕໍ່ໄປໂດຍປາກຕໍ່ປາກໃນໝູ່ເພື່ອນຝູງ ຫລື ແມ້ແຕ່ຢູ່ໃນວັດວາອາຣາມວ່າກູ່ມຄົນເຫລົ່ານີ້ພວກເຂົາຈະໄດ້ຮັບເງິນກ້ອນໃຫຍ່ທີ່ເປັນເງິນມໍຣະດົກຢ່າງແທ້ຈິງແລະຕໍ່ມາພວກເພື່ອນໆທີ່ໄດ້ມາເຫັນຈາກການເວົ້າຂອງເພື່ອນໃກ້ຊິດກໍຈະຫລົງກົນ ແລ້ວກໍເຕັມໃຈວາງເງິນໃຫ້ແກ່ພວກມິດສາຊີພເຫລົ່ານີ້ໄປແບບທີ່ບໍ່ໄດ້ສະເດືອກໃຈເພາະຍັງມີຄວາມ ຫວັງວ່າພວກຕົນຈະໄດ້ຮັບເງິນກ້ອນໃຫຍ່ເຫລົ່ານັ້ນກັບຄືນມາມື້ໃນເວລາບໍ່ດົນ ແລະກວ່າຈະຮູ້ວ່າໂຕເອງຖືກສໍ້ໂກງຈາກພວກມິດສາຊີພເຫລົ່ານີ້ມັນກໍສວາຍເກີນແກ້ເສັຽແລ້ວ.

ໃນບາງກໍຣະນີທີ່ພວກມິດສາຊີພ ຫລື ສິບແປດມົງກຸດມັນກໍຈະບໍ່ໄດ້ມີການກົ້ມ ຫລັກຖານກ່ຽວກັບການສໍ້ໂກງເຫລົ່ານີ້ໄວ້ເລີຍ ແລະ ເລື້ອງລາວກໍຈະກາຍມາເປັນແຄ່ເລື້ອງຂອງການກູ້ຢືມເງິນກັນແບບທັມະດາທີ່ຜູ້ໃຫ້ຢືມກໍມີຄວາມຍິນດີໃຫ້ດ້ວຍຄວາມເຕັມໃຈເພື່ອຫວັງຜົລກຳໄລຈາກດອກເບັ້ຽ ຊຶ່ງພວກກູ່ມມິດສາຊີພເຫລົ່ານີ້ພວກມັນຈະມີຊ່ອງຫວ່າງຫລີກໜີໜີ້ດ້ວຍການລົ້ມລະລາຍ ແລະກໍບໍ່ຕ້ອງໄດ້ໃຊ້ເງິນທີ່ກູ້ຢືມແທນໃຫ້ແກ່ເຈົ້າໜີ້ຕາມທີ່ໄດ້ລົງຊື່ສັນຍາເຊັນກູ້ຢືມເງິນກັນໄປແລ້ວນັ້ນ.

ຖ້າຫາກວ່າທ່ານຜູ້ນຶ່ງຫລືຈະເປັນຍາດຕິພີ່ນ້ອງຂອງທ່ານກໍດີທີ່ໄດ້ຕົກເປັນເຫຍື່ອຂອງພວກນັກຕົ້ມຕຸນ (ມິດສາຊີພ) ເຫລົ່ານີ້ແລ້ວສິ່ງທີ່ຈະເຮັດໄດ້ກໍຄືຂໍໃຫ້ທ່ານຈົ່ງເກັບເອົາ ຫລັກຖານທີ່ມີຢູ່ໄວ້ໃຫ້ຫລາຍໆເທົ່າທີ່ຈະເຮັດໄດ້ເຊັ່ນຫລັກສນະຂອງຜູ້ທີ່ເຂົ້າມາສໍ້ໂກງເງິນຂອງທ່ານ ຮູບຖ່າຍສຳເນົາບັດປະຊາຊົນ ຫລື ໃບຂັບຂີ່ຣອບພິມນີ້ວມືຖ້າເປັນໄປໄດ້ພາຍຫລັງທີ່ສາມາດລວບລວມຫລັກຖານເຫລົ່ານີ້ໄດ້ແລ້ວກໍໃຫ້ເຂົ້າໄປແຈ້ງຄວາມກັບເຈົ້າໜ້າທີ່ຕຳຣວຈພາຍໃນທ້ອງຖິ່ນທີ່ຜູ້ສໍ້ໂກງໄດ້ຮັບເງິນຈາກທ່ານໄປຫລືທີ່ທ່ານໄດ້ຮັບການຕິດຕໍ່ມາຈາກບຸກຄົນທີ່ໃກ້ຊິດກັບທ່ານ ຫລືສະຖານທີ່ຊຶ່ງບຸກຄົນເຫລົ່ານັ້ນອາສັຍຢູ່ໃນປັດຈຸບັນຣອບພິມນິ້ວມືຖ້າເປັນໄປໄດ້ພາຍຫລັງທີ່ສາມາດລວບລວມຫລັກຖານເຫລົ່ານໄດ້ແລ້ວກໍໃຫ້ເຂົ້າໄປແຈ້ງຄວາມີ້

ກັບເຈົ້າໜ້າທີ່ຕຳຣວຈພາຍໃນທ້ອງຖິ່ນທີ່ຜູ້ສໍ້ໂກງໄດ້ຮັບເງິນຈາກທ່ານໄປຫລືທີ່ທ່ານໄດ້ຮັບການຕິດຕໍ່ມາຈາກບຸກຄົນທີ່ໃກ້ຊິດກັບທ່ານ ຫລືສະຖານທີ່ຊຶ່ງບຸກຄົນເຫລົ່ານັ້ນອາສັຍຢູ່ໃນປັດຈຸບັນ.

ຖ້າຈຳນວນເງິນທີ່ຖືກສໍ້ໂກງໄປນັ້ນຫລາຍກວ່າ $50ພັນດອນລາສະຫະຣັຖຫລືອາດຈະຫລາຍກວ່ານັ້ນອີກແລະການສໍ້ໂກງນີ້ມີການໃຊ້ໂທຣະສັພຫລືຈົດໝາຍການຕິດຕໍ່ນຳດ້ວຍທ່ານກໍຄວນທີ່ຈະໄດ້ແຈ້ງຄວາມກັບ "ເອຟບີໄອ" ເຈົ້າໜ້າທີ່ໜ່ວຍສືບຣາຊການລັບແລະເຖິງແມ່ນວ່າຈຳນວນເງິນຈະບໍ່ສູງເຖິງ $50,000 ພັນດອນລາສະຫະຣັຖທ່ານກໍສາມາດແຈ້ງໃຫ້ທາງເອຟບີໄອໄດ້ເຊັ່ນດຽວກັນເພື່ອວ່າໃນກໍຣະນີທີ່ພວກມິດສາຊີພສືບແປດມົງກຸດເຫລົ່ານີ້ມັນຈະບໍ່ໄດ້ມີໂອກາດໄປທຳການສໍ້ໂກງໃນຫລັກສນະດຽວກັນນີ້ກັບບຸກຄົນລາຍອື່ນໆເພີ້ມອີກ

------------------------

Many of you might have heard of the Nigerian Scam on CBS 60-Minute and other similar television programs. Recently, I received a few telephone calls informing me that similar scams are taking place in the Thai and Lao communities. I hope that this article will help the readers avoid a similar scam.

The Nigerian Scam was so named because many of the scams came from or originated in Nigeria. The typical scam will start with an email or a letter, claiming to be from an heir of a former government official in Nigeria or other countries. The writer generally asks the recipient to lend or give the writer an expense money so that the writer would be able to obtain a very large sum, i.e., US $100 million, and reward the recipient very generously. The writer sometimes would provide proof from the Nigerian government to show that such large sum exists in the writer's name. Some writers would ask for the recipient's bank account and routing number so that the writers would be able to wire the money to the recipient. After receiving the "expense" money or withdrawing the money from the recipient's bank account, the writer will never be heard from again.

Like the Nigerian Scam, the scams in the Thai and Lao communities relies on people's greed. The scam artist would generally claims that he or she has access to or otherwise inherits a very large sum of money, i.e., US $100 million and that the fund will be



forthcoming very shortly. He/she would spend very larvishly in front of someone or give money to that person and/or promise to give that person a very large sum of money. Such person would in turn tell his or her friend(s) or even a temple that the scam artist will really inherit or receive that large sum of money. The friend(s) would then lend the money to the scam artist thinking that he/she/they would receive a very large return within a very short time. By the time the friend find(s) out about the scam, the scam artist would move away or disappear. In some instances where the scam artist left no evidence about the scam(s) and the matter involved simple loan transaction, the scam artist would simply file bankruptcy to avoid paying on the promissory note(s).

If any reader becomes victim of such scam, a course of action would be to collect as much evidence about the scam as possible such as the identity of the scam artist (his/her photo(s) , identification card(s), fingerprint(s) if possible, ...). After collecting sufficient evidences, the reader should immediately report the scam to the local police station where the scam artist took the reader's money and/or where the reader was contacted and/or where the scam artist lived. If the amount of the scam is relatively large, i.e., $50,000 or more, and the scam involved telephone or mail, the reader should also report the scam to the Federal Bureau of Investigation (FBI). Even if the scam amount is less than $50,000.00, the reader may want to report it to the FBI anyway in case the scam artist had committed similar scam(s) in other state(s).


Interested in getting your share of the one-million Lao-American market?

Call LAONET MAGAZINE at 626-943-8889 between 9 AM - 6 PM M-F to place your ad!

ASIANET.com

ຖ້າທ່ານສົນໃຈລົງໂຄສນາໃນ
ນິຕຍະສາຣລາວແມັດທ໌
ກະຣຸນາຕິດຕໍ່ກັບ
ທ່ານບົວເພັດ ພິລາວັນ
ຕາມໂທຣະສັພນໍ້າເບີ
(626) 943-8889
Extension 21
ຣະຫວ່າງ
9:00AM-6:00PM
ວັນຈັນ ເຖິງວັນສຸກ